ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2005 /ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 28 SEP 2015

# ຂໍ້ຕົກລົງ

# ວ່າດ້ວຍຜະລິດຕະພັນໄມ້

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການກຳນົດປະເພດ, ຊະນິດ, ຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ ເພື່ອອຳນວຍຄວາມສະດວກ ແກ່ວຽກງານການຄຸ້ມຄອງການຜະລິດ, ນຳໃຊ້ ແລະ ການຈຳໜ່າຍຜະລິດຕະພັນໄມ້ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ, ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ສົ່ງເສີມການພັດທະນາອຸດສາຫະກຳປຸງແຕ່ງໄມ້ໃຫ້ມີຄວາມທັນສະໄໝ, ສ້າງມູນຄ່າເພີ່ມສູງຂຶ້ນເທື່ອລະກ້າວ, ປົກປັກຮັກສາສິ່ງແວດລ້ອມ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ຢ່າງມີປະສິດທິພາບ ແລະ ຍືນຍົງ, ປະກອບສ່ວນແກ່ການພັດທະນາ ເສດຖະກິດຂອງຊາດໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

### ມາດຕາ 2 ຜະລິດຕະພັນໄມ້

ຜະລິດຕະພັນໄມ້ ແມ່ນ ຜະລິດຕະພັນທີ່ໄດ້ຈາກການນຳເອົາວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບເຂົ້າຜ່ານຂັ້ນຕອນ ຫຼື ຂະບວນການຜະລິດຂອງໂຮງງານປຸງແຕ່ງໄມ້ ເພື່ອປ່ຽນແປງຈາກສະພາບເດີມໄປສູ່ຜະລິດຕະພັນໃໝ່ ທີ່ສາມາດສະໜອງແກ່ການຊົມໃຊ້ ຫຼື ເປັນສິນຄ້າຈຳໜ່າຍ.

ຜະລິດຕະພັນໄມ້ ໄດ້ຈັດເປັນປະເພດ; ຊະນິດ ແລະ ຮູບແບບ ໂດຍແຕ່ລະປະເພດ, ຊະນິດ ແລະ ຮູບແບບ ມີຂະໜາດຢ່າງຊັດເຈນ.

ມາດຕາ 3 ການອະທິບາຍຄຳສັບ

1. **ໂຮງງານປຸງແຕ່ງໄມ້** ໝາຍເຖິງ ໂຮງງານອຸດສາຫະກຳ ແລະ ໂຮງງານຫັດຖະກຳ ທີ່ດຳເນີນການປຸງແຕ່ງໄມ້;
2. **ຂະບວນການຜະລິດ** ໝາຍເຖິງ ຂັ້ນຕອນການຜະລິດ ຫຼື ລະບົບສາຍໄຍການຜະລິດຂອງໂຮງງານປຸງແຕ່ງ, ຊຶ່ງເລີ່ມແຕ່ຂັ້ນຕອນການເຄື່ອນຍ້າຍວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ ເຂົ້າຜ່ານຂະບວນການປຸງແຕ່ງຕາມການອອກແບບທາງວິຊາການສະເພາະ ແຕ່ລະປະເພດ, ຊະນິດ ແລະ ຮູບແບບຂອງຜະລິດຕະພັນໄມ້;
3. **ມູນຄ່າເພີ່ມ** ໝາຍເຖິງ ມູນຄ່າຂອງຜະລິດຕະພັນໄມ້ທີ່ໄດ້ຮັບການສ້າງຂຶ້ນຈາກຂະບວນການຜະລິດໃນແຕ່ລະຂັ້ນຕອນ ຫລື ລະບົບສາຍໄຍການຜະລິດ ຂອງໂຮງງານປຸງແຕ່ງໄມ້;
4. **ວັດຖຸດິບ** ໝາຍເຖິງ ໄມ້ທ່ອນ, ຮາກໄມ້, ຕໍໄມ້, ປູດໄມ້, ງ່າໄມ້ ຫຼື ທຸກພາກສ່ວນຂອງຕົ້ນໄມ້ ທີ່ຍັງບໍ່ໄດ້ຜ່ານຂະບວນການຜະລິດ
5. **ວັດຖຸເຄິ່ງສຳເລັດຮູບ** ໝາຍເຖິງ ປະເພດຜະລິດຕະພັນໄມ້ເລື່ອຍແປຮູບ ຫຼື ປະເພດຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ຫຼື ຊິ້ນສ່ວນປະກອບອື່ນ ທີ່ສາມາດສືບຕໍ່ຜະລິດ, ປຸງແຕ່ງໃຫ້ກາຍເປັນຜະລິດຕະພັນໄມ້ສຳເລັດຮູບ;
6. **ໄມ້ທ່ອນ** ໝາຍເຖິງ ສ່ວນໜຶ່ງຂອງຕົ້ນໄມ້ ທີ່ຖືກຕັດແຍກອອກຈາກຕໍໄມ້ ແລະ ງ່າໄມ້, ຊຶ່ງຂະໜາດໜ້າຕ້າງ ຫຼື ເສັ້ນຜ່າສູນກາງຂອງໜ້າຕ້າງ ແລະ ຄວາມຍາວ ມີຄວາມຖືກຕ້ອງຕາມທີ່ກຳນົດໄວ້ໃນມາດຕາ 1 ຂອງຂໍ້ຕົກລົງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 116/ກປ.07 ລົງວັນທີ 17/05/2007 ວ່າດ້ວຍລະບຽບການວັດແທກໄມ້ທ່ອນ, ຕໍໄມ້, ປູດໄມ້ ແລະ ການຈັດຊັ້ນຄຸນນະພາບໄມ້ທ່ອນ;
7. **ຮາກໄມ້** ໝາຍເຖິງ ສ່ວນໜຶ່ງຂອງຕົ້ນໄມ້ ທີ່ເປັນສ່ວນຢູ່ຈຸດລຸ່ມ ຫຼື ຕ່ຳສຸດຂອງຕົ້ນໄມ້, ຊຶ່ງຢູ່ໃນພື້ນດິນ;
8. **ຕໍໄມ້** ໝາຍເຖິງ ສ່ວນໜຶ່ງຂອງຕົ້ນໄມ້ ທີ່ໄດ້ຈາກການຕັດແຍກຮາກໄມ້ ແລະ ຕົ້ນໄມ້ອອກຈາກກັນ;
9. **ປູດໄມ້** ໝາຍເຖິງ ສ່ວນໜຶ່ງຂອງຕົ້ນໄມ້ ທີ່ມີຮູບຮ່າງລັກສະນະເປັນປູດ ຫຼື ເປັນໂນນທີ່ສູງຂຶ້ນຈາກໜ້າຮອບນອກຂອງຕົ້ນໄມ້;
10. **ງ່າໄມ້** ໝາຍເຖິງ ສ່ວນໜຶ່ງທີ່ປົ່ງອອກຈາກ ສ່ວນໃດໜຶ່ງ ຂອງລຳຕົ້ນໄມ້;
11. **ສິນເຂົ້າ** ໝາຍເຖິງ ຂັ້ນຕອນໜຶ່ງຂອງຂະບວນການຜະລິດ ດ້ວຍການຮັບຮູ້ ຫຼື ຢັ້ງຢືນຄວາມຖືກຕ້ອງຂອງວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ ທີ່ເຄື່ອນຍ້າຍເຂົ້າໄປໃນຂອບເຂດບໍລິເວນຂອງໂຮງງານປຸງແຕ່ງໄມ້;
12. **ສິນອອກ** ໝາຍເຖິງ ຂັ້ນຕອນໜຶ່ງຂອງຂະບວນການຜະລິດ ດ້ວຍການຮັບຮູ້ ຫຼື ຢັ້ງຢືນຜະລິດຕະພັນໄມ້ອອກຈາກໂຮງງານປຸງແຕ່ງໄມ້;
13. ບັນຊີວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບສະໜາມ ສາມ (III) ໝາຍເຖິງ ເອກະສານຢັ້ງຢືນວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ ທີ່ເຄື່ອນຍ້າຍເຂົ້າສູ່ ແລະ ເກັບຮັກສາໄວ້ຢູ່ສະໜາມ ສາມ;

14. **ສະໜາມສາມ (III)** ໝາຍເຖິງ ສະຖານທີ່ເກັບຮັກສາ ວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ ທີ່ນອນໃນຂອບເຂດໂຮງງານປຸງແຕ່ງໄມ້ ເພື່ອລໍຖ້າປ້ອນເຂົ້າໄປໃນຂະບວນການຜະລິດ;

15. **ບັນຊີຜະລິດຕະພັນໄມ້** ໝາຍເຖິງ ເອກະສານບັນທຶກລາຍການຜະລິດຕະພັນໄມ້ຢ່າງລະອຽດ ກ່ຽວກັບຈຳນວນ, ບໍລິມາດ, ຂະໜາດ ແລະ ມູນຄ່າຂອງຜະລິດຕະພັນໄມ້;

16. **ໄມ້ອັດ** ໝາຍເຖິງ ໄມ້ອັດທົ່ວໄປ ແລະ ໄມ້ອັດຊິບບອດ, ຊຶ່ງເປັນຜະລິດຕະພັນຈາກໂຮງງານໄມ້ອັດ ໂດຍນຳໃຊ້ວັດຖຸດິບຈາກໄມ້ທ່ອນ, ໄມ້ປອກ, ໄມ້ຝານ ຫຼື ໄມ້ເສດຕ່າງໆ;

17. **ໄມ້ສຳລັບການກໍ່ສ້າງ** ໝາຍເຖິງ ຜະລິດຕະພັນໄມ້ ທີ່ໄດ້ຜ່ານຂະບວນການເລື່ອຍແປຮູບມາແລ້ວ ເປັນຕົ້ນ: ໄມ້ຂື່, ໄມ້ຂ້າວ, ໄມ້ສີຍົວ, ໄມ້ອົກໄກ່, ໄມ້ຕົງ, ໄມ້ຂາງ ແລະ ອື່ນໆ. ຜະລິດຕະພັນໄມ້ດັ່ງກ່າວນີ້ ມີທັງປະເພດເຄິ່ງສຳເລັດຮູບ ແລະ ປະເພດສຳເລັດຮູບ;

18. **ໄມ້ປະກອບໃນອາຄານ** ໝາຍເຖິງ ຜະລິດຕະພັນໄມ້ ທີ່ເປັນສ່ວນປະກອບໃນອາຄານຕ່າງໆ ເປັນຕົ້ນ: ວົງກົບ, ບານປະຕູ/ປ່ອງຢ້ຽມ, ຂັ້ນໄດ, ລູກຕົ່ງ ແລະ ອື່ນໆ. ຜະລິດຕະພັນໄມ້ດັ່ງກ່າວນີ້ ມີທັງປະເພດເຄິ່ງສຳເລັດຮູບ ແລະ ປະເພດສຳເລັດຮູບ;

19. **ໄມ້ປັກເກ, ໄມ້ປູພື້ນ ແລະ ໄມ້ປະກອບຖັງລົດ** ໝາຍເຖິງ ຜະລິດຕະພັນໄມ້ປັກເກ, ໄມ້ປູພື້ນທຸກຊະນິດ ແລະ ຜະລິດຕະພັນໄມ້ ສຳລັບປະກອບເປັນຖັງລົດ ໂດຍນຳເອົາໄມ້ເລື່ອຍ, ໄມ້ຊອຍໄປຜ່ານຂະບວນການຜະລິດ ເຊັ່ນ: ຕັດຂະໜາດ, ອົບ, ກົບ, ແລ່ນຮ່ອງ, ແລ່ນ ລີ້ນ ແລະ ອື່ນໆ;

20. **ໄມ້ເຊື່ອມຕໍ່ປະສານ (Laminated Products/Finger joint)** ໝາຍເຖິງ ຜະລິດຕະພັນໄມ້ ທີ່ໄດ້ຈາກໂຮງງານປຸງແຕ່ງໄມ້ ດ້ວຍການນຳໃຊ້ໄມ້ຊອຍ, ໄມ້ເສດຂະໜາດນ້ອຍ, ໄມ້ສັ້ນ ມາເຊື່ອມຕໍ່ເຂົ້າກັນຫຼາຍແຜ່ນ ເພື່ອໃຫ້ໄດ້ຂະໜາດທີ່ຕ້ອງການ ໂດຍຜ່ານຂະບວນການອົບ, ຕັດຂະໜາດ, ກົບ, ຂັດ, ປາດ, ເຊື່ອມຕໍ່ດ້ວຍກາວ ແລະ ອັດດ້ວຍຄວາມຮ້ອນ;

21. **ພາຊະນະບັນຈຸທີ່ເຮັດດ້ວຍໄມ້** ໝາຍເຖິງ ຜະລິດຕະພັນໄມ້ທີ່ຜ່ານຂະບວນການຜະລິດ ທີ່ມີຄວາມປານີດ, ສວຍງາມ ແລະ ຊົມໃຊ້ໄດ້ເລີຍ ເປັນຕົ້ນ ພະຖາດ, ຈອກ, ກັບ, ເຕົ້າດອກໄມ້ ແລະ ອື່ນໆ;

22. **ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້** ໝາຍເຖິງ ຜະລິດຕະພັນໄມ້ທີ່ໄດ້ຜ່ານຂະບວນການປຸງແຕ່ງ ໃນກິດຈະການອຸດສາຫະກຳ ຫຼື ຫັດຖະກຳ ທີ່ສາມາດຊົມໃຊ້ໄດ້ເລີຍ ເປັນຕົ້ນ ໄມ້ຖູ່, ຈອງ, ບ່ວງ, ຂໍເກາະເສື້ອ, ຫວີ ແລະ ອື່ນໆ;

23. **ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້** ໝາຍເຖິງ ຜະລິດຕະພັນໄມ້ທີ່ຜ່ານຂະບວນການປຸງຂອງໂຮງງານເຄື່ອງເຟີນີເຈີ ເຊັ່ນ: ຕູ້ໃສ່ເສື້ອຜ້າ, ຊຸດໂຕະ ແລະ ຕັ່ງ,...;

24. **ເຄື່ອງຫັດຖະກຳທີ່ເຮັດດ້ວຍໄມ້** ໝາຍເຖິງ ຜະລິດຕະພັນໄມ້ທີ່ໄດ້ຜ່ານຂະບວນການປຸງແຕ່ງໃນກິດຈະການຫັດຖະກຳ ເຊັ່ນ: ການຄວັດ, ການເຈາະ, ແກະສະລັກລວດລາຍຕ່າງໆ ມີຮູບຊົງສວຍງາມເດັ່ນຊັດ ແລະ ສາມາດຊົມໃຊ້ໄດ້ເລີຍ;

25. **ໄມ້ປອກ ແລະ ໄມ້ຝານ** ແມ່ນ ຜະລິດຕະພັນໄມ້ຈາກໂຮງງານປຸງແຕ່ງໄມ້ທີ່ຜ່ານຂະບວນການປອກ ຫຼື ຝານ, ຊຶ່ງນຳໃຊ້ວັດຖຸດິບຈາກໄມ້ທ່ອນ. ຜະລິດຕະພັນດັ່ງກ່າວ ມີມູນຄ່າເພີ່ມປານກາງ, ສາມາດສະໜອງໃຫ້ໂຮງງານປຸງແຕ່ງໄມ້ ເພື່ອສືບຕໍ່ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ເຊັ່ນ: ໄມ້ອັດ, ແຜ່ນໄມ້, ແຜ່ນໜ້າໂຕະ ແລະ ອື່ນໆ.

26. **ໄມ້ເສດ, ຂີ້ເລື່ອຍ ແລະ ຂີ້ກົບ** ໝາຍເຖິງ ເສດໄມ້ທີ່ເກີດຈາກການເລື່ອຍ, ການຊອຍ, ການຕັດ, ການກົບ, ການຄົວດໄມ້ຕ່າງໆ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ດຳເນີນທຸລະກິດກ່ຽວກັບການປຸງແຕ່ງໄມ້ ຢູ່ ສປປລາວ.

ຂໍ້ຕົກລົງສະບັບນີ້ ບໍ່ກວມເອົາການຜະລິດ ເຫຼື້ອເຈ້ຍ, ເຈ້ຍ, ຖ່ານໄມ້, ຫວາຍ ແລະ ໄມ້ປ່ອງ.

## ໝວດທີ II

## ປະເພດ, ຊະນິດ ແລະ ຮູບແບບ ຂອງຜະລິດຕະພັນໄມ້

**ມາດຕາ 5 ປະເພດ, ຊະນິດ ແລະ ຮູບແບບ ຜະລິດຕະພັນໄມ້**

ຜະລິດຕະພັນໄມ້ປະກອບມີ ສາມ ປະເພດຄື: ຜະລິດຕະພັນໄມ້ເລື່ອຍແປຮູບ, ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ແລະ ຜະລິດຕະພັນໄມ້ສຳເລັດຮູບ, ຊຶ່ງແຕ່ລະປະເພດ ແບ່ງອອກເປັນຫຼາຍຊະນິດ ແລະ ຮູບແບບ ຕາມລາຍລະອຽດທີ່ໄດ້ກຳນົດໃນມາດຕາ 6, 7, ແລະ 8 ຂອງຂໍ້ຕົກລົງສະບັບນີ້.

ຜະລິດຕະພັນໄມ້ ທີ່ເປັນປະເພດ ຫຼື ຊະນິດ ຫຼື ຮູບແບບ ທີ່ແຕກຕ່າງຈາກການກຳນົດໃນຂໍ້ຕົກລົງສະບັບນີ້ ໃຫ້ຜູ້ດຳເນີນທຸລະກິດກ່ຽວກັບການປຸງແຕ່ງໄມ້ ສະເໜີຕໍ່ ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຄົ້ນຄວ້າຈັດເຂົ້າປະເພດ, ຊະນິດ ແລະ ຮູບແບບ ຕາມຄວາມເໝາະສົມ.

**ມາດຕາ 6 ຜະລິດຕະພັນໄມ້ເລື່ອຍແປຮູບ**

ຜະລິດຕະພັນໄມ້ເລື່ອຍແປຮູບ ແມ່ນ ຜະລິດຕະພັນໄມ້ທີ່ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງຂັ້ນໜຶ່ງ ແລະ ມີມູນຄ່າເພີ່ມຕ່ຳ ເປັນຕົ້ນ: ໄມ້ຕີຕັບ, ໄມ້ແປຮູບ, ໄມ້ຊອຍ ທີ່ມີຂະໜາດຄວາມໜາ, ຄວາມກວ້າງ ແລະ ລວງຍາວ ແຕກຕ່າງກັນ.

ໄມ້ເລື່ອຍແປຮູບປະກອບມີ ສາມ ຊະນິດ ຄື: ໄມ້ຕີຕັບ, ໄມ້ແປຮູບ ແລະ ໄມ້ຊອຍ.

1. **ໄມ້ຕີຕັບ** ແມ່ນ ໄມ້ເລື່ອຍທີ່ມີຂະໜາດໃຫຍ່ທີ່ໄດ້ຈາກການເລື່ອຍໄມ້ທ່ອນ ທີ່ມີມູນຄ່າເພີ່ມຕ່ຳ, ສາມາດນຳໄປປຸງແຕ່ງເປັນຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບໄດ້.
2. **ໄມ້ແປຮູບ** ແມ່ນ ໄມ້ເລື່ອຍທີ່ນຳເອົາໄມ້ຕີຕັບມາເລື່ອຍໃຫ້ມີຂະໜາດຕ່າງໆ ທີ່ນ້ອຍກວ່າຂະໜາດຂອງໄມ້ຕີຕັບ ແລະ ມີມູນຄ່າເພີ່ມຕ່ຳ.
3. **ໄມ້ຊອຍ** ແມ່ນ ໄມ້ເລື່ອຍທີ່ມີຂະໜາດນ້ອຍ, ໄດ້ມາຈາກການຊອຍໄມ້ແປຮູບ, ປີກໄມ້ ແລະ ງ່າໄມ້; ຊຶ່ງມີມູນຄ່າເພີ່ມຕ່ຳ.

ມາດຕາ 7 ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ

ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ແມ່ນ ຜະລິດຕະພັນໄມ້ ທີ່ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງຂັ້ນສອງ ໂດຍສືບຕໍ່ຜະລິດຈາກຂັ້ນໜຶ່ງ ທີ່ຜ່ານຂະບວນການອົບ ຫຼື ຕາກແດດ, ຕັດຂະໜາດ, ຂຶ້ນຮູບ, ປາດໂຄ້ງ, ກົບ ແລະ ອື່ນໆ ແຕ່ບໍ່ສາມາດ ແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ (Knock-down) ຕາມການອອກແບບເປັນໜຶ່ງຊຸດ ຫຼື ໜຶ່ງຫຼັງ ແລະ ມີມູນຄ່າເພີ່ມປານກາງ.

ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ປະກອບມີຫຼາຍຊະນິດເຊັ່ນ: ໄມ້ປອກ, ໄມ້ຝານ, ໄມ້ສຳລັບການກໍ່ສ້າງ, ໄມ້ປະກອບໃນອາຄານ ແລະ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບອື່ນໆ ທີ່ມີຂະໜາດ ແລະ ຮູບແບບຄ້າຍຄືກັບຜະລິດຕະພັນໄມ້ສຳເລັດຮູບໃດໜຶ່ງ.

ຜະລິດຕະພັນໄມ້ເຄິ່ງສຳເລັດຮູບທີ່ມີຂະໜາດ ແລະ ຮູບແບບຄ້າຍຄືກັບຜະລິດຕະພັນໄມ້ສຳເລັດຮູບໃດໜຶ່ງ ເຊັ່ນ: ຜະລິດຕະພັນໄມ້ເຄິ່ງສຳເລັດຮູບທີ່ ມີຂະໜາດ ແລະ ຮູບແບບຄ້າຍຄືກັບເຄື່ອງເຟີນີເຈີສຳເລັດຮູບ, ໄມ້ປັກເກ ແລະ ໄມ້ປູພື້ນສຳເລັດຮູບ, ໄມ້ປະກອບຖັງລົດສຳເລັດຮູບ ແລະ ອື່ນໆ. ຜະລິດຕະພັນໄມ້ດັ່ງກ່າວບໍ່ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ (Knock-down) ຕາມການອອກແບບເປັນໜຶ່ງຊຸດ ຫຼື ໜຶ່ງຫຼັງ, ຕ້ອງໄດ້ປຸງແຕ່ງຕື່ມ ຈຶ່ງຈະເປັນຜະລິດຕະພັນໄມ້ສຳເລັດຮູບ ຫຼື ປະກອບເຂົ້າກັນເປັນຜະລິດຕະພັນສຳເລັດຮູບ ເຊັ່ນ: ຊິ້ນສ່ວນປະ ກອບຂອງເຄື່ອງເຟີນີເຈີ (ສະລິງ, ໂຕະ, ຕັ່ງ, ຕຽງ, ຕູ້), ຖັງລົດ, ໄມ້ປັກເກ ແລະ ໄມ້ປູພື້ນ.

ຜະລິດຕະພັນໄມ້ເຄິ່ງສຳເລັດຮູບມີ 2 ຮູບແບບຄື:

1. ຮູບແບບເປັນໜ່ວຍ ຫຼື ເປັນຊຸດເຄິ່ງສຳເລັດຮູບ ທີ່ບໍ່ສາມາດນຳໃຊ້ໄດ້ເລີຍ, ບໍ່ສາມາດປະກອບເຂົ້າກັນເປັນໜ່ວຍ ຫຼື ເປັນຊຸດໄດ້ເລີຍ ເຊັ່ນ: ຕູ້, ໂຕະ ຕັ່ງ, ຕຽງ ແລະ ອື່ນໆ.
2. ຮູບແບບເປັນຊິ້ນສ່ວນທີ່ບໍ່ສາມາດນຳໃຊ້ໄດ້ເລີຍ ເຊັ່ນ: ເຄື່ອງປະກອບໃນລົດຍົນ; ໄມ້ປັກເກ; ໄມ້ເຊື່ອມຕໍ່ປະສານ; ຂາ; ຂາງ, ແປ້ນໜ້າ, ຢ່ວງຈັບຂອງຕູ້, ໂຕະ, ຕັ່ງ, ຕຽງ ແລະ ອື່ນໆ.

ມາດຕາ 8 ຜະລິດຕະພັນໄມ້ສຳເລັດຮູບ

ຜະລິດຕະພັນໄມ້ສຳເລັດຮູບ ແມ່ນ ຜະລິດຕະພັນໄມ້ ທີ່ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງຂັ້ນສາມ (ປຸງແຕ່ງຂັ້ນສຸດທ້າຍ) ໂດຍສືບຕໍ່ຜະລິດຈາກຂັ້ນສອງ ເຊັ່ນ: ບາກ, ເຈາະ, ສິ່ວ, ແລ່ນຮ່ອງ, ແລ່ນລີ້ນ, ປາດເດືອຍ, ເຊື່ອມຕໍ່, ຂັດຜິວ, ຂັດເງົາ, ຈັບນ໊ອດ ແລະ ອື່ນໆ; ຊຶ່ງສາມາດນຳໃຊ້ໄດ້ເລີຍ ຫຼື ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ (Knock-down) ໂດຍບໍ່ຕ້ອງປຸງແຕ່ງເພີ່ມເຕີມ. ຜະລິດຕະພັນໄມ້ສຳເລັດຮູບ ມີມູນຄ່າເພີ່ມສູງ.

ຜະລິດຕະພັນໄມ້ສຳເລັດຮູບປະກອບດ້ວຍຫຼາຍຊະນິດ ເຊັ່ນ: ໄມ້ອັດ, ໄມ້ສຳລັບການກໍ່ສ້າງ, ໄມ້ປະກອບໃນອາຄານ, ໄມ້ປັກເກ, ໄມ້ປູພື້ນ, ໄມ້ປະກອບຖັງລົດ,ໄມ້ເຊື່ອມຕໍ່ປະສານ, ພາຊະນະບັນຈຸທີ່ເຮັດດ້ວຍໄມ້, ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້, ເຄື່ອງເຟີນີເຈີ, ຂີ້ເລື່ອຍອັດແທ່ງ, ຂີ້ເລື່ອຍອັດເມັດ ແລະ ເຄື່ອງຫັດຖະກຳໄມ້ຕ່າງໆ.

ຜະລິດຕະພັນໄມ້ສຳເລັດຮູບມີ 2 ຮູບແບບຄື:

1. ຮູບແບບທີ່ເປັນໜ່ວຍ ຫຼື ເປັນຊຸດສຳເລັດຮູບ ທີ່ສາມາດນຳໃຊ້ໄດ້ເລີຍ, ສາມາດປະກອບເຂົ້າກັນເປັນໜ່ວຍ ຫຼື ເປັນຊຸດໄດ້ເລີຍເຊັ່ນ: ຕູ້,ໂຕະ, ຕັ່ງ, ຕຽງ ແລະ ອື່ນໆ;

2. ຮູບແບບທີ່ເປັນຊິ້ນສ່ວນທີ່ສາມາດນຳໃຊ້ໄດ້ເລີຍເຊັ່ນ: ເຄື່ອງປະກອບໃນລົດຍົນ; ໄມ້ປັກເກ; ໄມ້ເຊື່ອມຕໍ່ປະສານ; ຂາໂຕະ, ຂາຕັ່ງ, ຂາຕູ້; ແປ້ນຂ້າງ, ແປ້ນໜ້າ, ຢ່ວງຈັບຂອງຕູ້ ແລະ ອື່ນໆ.

## ໝວດທີ III
## ຂະໜາດຜະລິດຕະພັນໄມ້

### ມາດຕາ 9 ການກຳນົດຂະໜາດຜະລິດຕະພັນໄມ້

ການກຳນົດຂະໜາດຜະລິດຕະພັນໄມ້ ແມ່ນການກຳນົດຄວາມໜາ, ຄວາມກວ້າງ ແລະ ຄວາມຍາວຂອງຜະລິດຕະພັນໄມ້ແຕ່ລະປະເພດ ເພື່ອໃຫ້ການປຸງແຕ່ງ, ການນຳໃຊ້ ແລະ ການຈຳໜ່າຍຖືກຕ້ອງຕາມຈຸດປະສົງ ແລະ ມີຄວາມເປັນທຳ. ຂະໜາດຂອງແຕ່ລະປະເພດ, ແຕ່ລະຊະນິດ ຂອງຜະລິດຕະພັນໄມ້ ໄດ້ກຳນົດນິດຢູ່ໃນຕາຕະລາງ ທີ່ເປັນເອກະສານຊ້ອນທ້າຍທີ 1, 2 ແລະ 3 ຂອງຂໍ້ຕົກລົງສະບັບນີ້.

ຜະລິດຕະພັນໄມ້ ທີ່ມີຂະໜາດແຕກຕ່າງຈາກທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຜູ້ດຳເນີນທຸລະກິດກ່ຽວກັບການປຸງແຕ່ງໄມ້ ຕ້ອງສະເໜີ ຕໍ່ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາ.

### ມາດຕາ 10 ຕາຕະລາງຂະໜາດຜະລິດຕະພັນໄມ້

ຕາຕະລາງກຳນົດຂະໜາດຂອງຜະລິດຕະພັນໄມ້ ແມ່ນ ຕາຕະລາງທີ່ກຳນົດລະຫັດຂອງກິດຈະການໂຮງງານ, ລະຫັດເຄົ້າຂອງສາລະບານພາສີ, ລາຍການຂອງຜະລິດຕະພັນໄມ້ ແລະ ຂະໜາດຂອງຜະລິດຕະພັນໄມ້ ຂອງແຕ່ລະປະເພດ, ຊະນິດ ແລະ ຮູບແບບ; ຊຶ່ງໄດ້ກຳນົດຊັດເຈນ ກ່ຽວກັບຄວາມໜາ, ກວ້າງ ແລະ ຍາວ. ຕາຕະລາງກຳນົດຂະໜາດຂອງຜະລິດຕະພັນໄມ້ ເປັນເອກະສານຊ້ອນທ້າຍທີ 1, 2 ແລະ 3 ຕາມດຳລັບຂອງຂໍ້ຕົກລົງສະບັບນີ້.

## ໝວດທີ IV
## ການຂຶ້ນບັນຊີ, ຕິດຕາມກວດກາ ແລະ ຢັ້ງຢືນຜະລິດຕະພັນໄມ້

### ມາດຕາ 11 ການຂຶ້ນບັນຊີຜະລິດຕະພັນໄມ້

ໃຫ້ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງໄມ້ ຂຶ້ນບັນຊີຜະລິດຕະພັນໄມ້ຂອງຕົນ ແລະ ສົ່ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນ ທຸກໆ ສາມ ເດືອນ.

ການຂຶ້ນບັນຊີຜະລິດຕະພັນໄມ້ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ຂອງປະເພດ, ຊະນິດ, ຮູບແບບ, ຂະໜາດ, ມູນຄ່າ ແລະ ລັກສະນະຂອງຜະລິດຕະພັນໄມ້.

ມາດຕາ 12 ການຕິດຕາມກວດກາ

ມອບໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕິດຕາມກວດກາການເຄື່ອນຍ້າຍວັດຖຸດິບ ແລະ ວັດຖຸເຄິ່ງສໍາເລັດຮູບ ດັ່ງນີ້::

1. ກວດກາລົ້ນເຂົ້າ ເພື່ອຮັບປະກັນຄວາມຖືກຕ້ອງຂອງວັດຖຸດິບ ຫຼື ວັດຖຸເຄິ່ງສໍາເລັດຮູບ ທີ່ຈະນໍາເຂົ້າສູ່ຂະບວນການຜະລິດຂອງໂຮງງານປຸງແຕ່ງໄມ້.

2. ກວດກາລົ້ນອອກ ເພື່ອຮັບປະກັນຄວາມຖືກຕ້ອງຂອງຜະລິດຕະພັນໄມ້ອອກຈາກໂຮງງານປຸງແຕ່ງໄມ້ ແລະ ຄວາມສອດຄ່ອງກັບຜົນຂອງການກວດກາລົ້ນເຂົ້າຂອງແຕ່ລະຄັ້ງ.

ການກວດກາ ລົ້ນເຂົ້າ ແລະ ລົ້ນອອກ ໃຫ້ເຮັດບົດບັນທຶກທຸກໆຄັ້ງ ແລະ ລາຍງານ ໃຫ້ກົມອຸດສາຫະກໍາ ແລະ ຫັດຖະກໍາ, ກະຊວງອຸດສາຫະກໍາ ແລະ ການຄ້າ ຮັບຊາບ ທຸກໆ ສາມ ເດືອນ.

ມາດຕາ 13 ການຢັ້ງຢືນມາດຖານຜະລິດຕະພັນໄມ້

ຜູ້ດໍາເນີນກິດຈະການໂຮງງານປຸງແຕ່ງໄມ້ ມີສິດສະເໜີຂໍການຢັ້ງຢືນມາດຖານຜະລິດຕະພັນໄມ້ ຫາກມີຄວາມຈໍາເປັນ ຫຼື ມີຄວາມຕ້ອງການຂອງຕະຫຼາດ. ການຢັ້ງຢືນມາດຖານຜະລິດຕະພັນໄມ້ ໃຫ້ປະຕິບັດຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຜະລິດຕະພັນອຸດສາຫະກໍາ ສະບັບເລກທີ 0469/ອຄ.ກອຫ, ລົງວັນທີ 05 ມີນາ 2012.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 14 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ຜູ້ດໍາເນີນກິດຈະການໂຮງງານທີ່ເຄື່ອນໄຫວຖືກຕ້ອງຕາມລະບຽບການ ແລະ ມີຜົນງານດີເດັ່ນ, ນໍາໃຊ້ວັດຖຸດິບເຂົ້າໃນການຜະລິດ ກໍ່ຄືການສ້າງມູນຄ່າເພີ່ມ ເພື່ອປຸງແຕ່ງເປັນຜະລິດຕະພັນສໍາເລັດຮູບ ທີ່ໄດ້ມາດຕະຖານ ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ຈະໄດ້ຮັບພິຈາລະນາສົ່ງເສີມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ໂດຍສະເພາະແມ່ນການເກັບອາກອນມູນຄ່າເພີ່ມ ຫຼື ອາກອນຊົມໃຊ້ຜະລິດຕະພັນໄມ້ສໍາເລັດຮູບຕ້ອງໃຫ້ຕໍ່າກວ່າຜະລິດຕະພັນໄມ້ເຄິ່ງສໍາເລັດຮູບ ແລະ ຜະລິດຕະພັນໄມ້ເລື່ອຍແປຮູບຕາມລໍາດັບ.

ມາດຕາ 15 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ດໍາເນີນຄະດີຕາມກົດໝາຍແລ້ວແຕ່ກໍລະນີ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມອຸດສາຫະກຳ ແລະ ຫັດຖະກຳ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ໂດຍປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ພາຍຫຼັງພິມລົງຈົດໝາຍເຫດທາງລັດຖະການ 15 ວັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ໃຊ້ປ່ຽນແທນຂໍ້ຕົກລົງເລກທີ 1415/ອຄ.ກອກ, ລົງວັນທີ 28/08/2008 ແລະ ແຈ້ງການສະບັບເລກທີ 0051/ອຄ.ກອກ, ລົງວັນທີ 13 ມັງກອນ 2009.

ບັນດາລະບຽບການຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ມີກ່ອນໜ້ານີ້, ຊຶ່ງຂັດກັບເນື້ອໃນຂອງຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ**

ນ. ເຂັມມະນີ ພົນເສນາ

## ເອກະສານຊ້ອນທ້າຍທີ 01

❖ **ຜະລິດຕະພັນໄມ້ເລື່ອຍແປຮູບ** ແມ່ນ ຜະລິດຕະພັນໄມ້ ທີ່ຜ່ານຂະບວນການຜະລິດ ຫຼື ການປຸງແຕ່ງຂັ້ນໜຶ່ງ (ຂັ້ນພື້ນຖານ) ຄື: ໄມ້ຕີຕັບ, ໄມ້ເລື່ອຍ, ໄມ້ຊອຍ ໃຫ້ມີຂະໜາດຕ່າງໆ (ໜາ, ກວ້າງ, ຍາວ) ຕາມຄວາມຕ້ອງການຂອງການຊົມໃຊ້ ແລະ ມີມູນຄ່າເພີ່ມຕໍ່າ. ຜະລິດຕະພັນດັ່ງກ່າວ ເປັນຜະລິດຕະພັນຂອງໂຮງງານເລື່ອຍໄມ້ (ໂຮງເລື່ອຍ), ສາມາດນຳໄປຜະລິດເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບໄດ້. ປະເພດ ແລະ ຂະໜາດ ຂອງຜະລິດຕະພັນດັ່ງກ່າວ ໄດ້ກຳນົດໄວ້ໃນຕາຕະລາງທີ 01 ລຸ່ມນີ້.

<u>ຕາຕະລາງທີ 01</u>: **ຜະລິດຕະພັນໄມ້ເລື່ອຍແປຮູບ (Sawn wood products)**

| ເລກລະຫັດກິດຈະການ (ໂຮງງານ) | ລະຫັດເຄົ້າ Heading | ລາຍການຜະລິດຕະພັນ: Products | | ຂະໜາດ (ຊມ) Size (cm) | | | ໝາຍເຫດ |
|---|---|---|---|---|---|---|---|
| | | ຊື່ເປັນພາສາລາວ | English | ໜາ/ Thick | ກ້ວາງ/Wide | ຍາວ/Length | |
| 1610 ໂຮງງານເລື່ອຍໄມ້ Sawmill | 4407 | 1.) ໄມ້ຕີຕັບ (ໄມ້ເລື່ອຍຂະໜາດໃຫຍ່) | 1. Big size sawed timber | ≧10 | ----- | ≦800 | |
| | 4407 | 2.) ໄມ້ແປຮູບທົ່ວໄປ | 2. General type of sawed timber | | | | |
| | | 2.1. ໄມ້ 4X8 | | 4 | 8 | ≤800 | |
| | | 2.2. ໄມ້ 5X10 | | 5 | 10 | ≤800 | |
| | | 2.3. ໄມ້ 5X12 | | 5 | 12 | ≤800 | |
| | | 2.4. ໄມ້ 5X15 | | 5 | 15 | ≤800 | |
| | | 2.5. ໄມ້ 6X12 | | 6 | 12 | ≤800 | |
| | | 2.6. ໄມ້ 6X18 | | 6 | 18 | ≤800 | |
| | | 2.7. ໄມ້ 6X20 | | 6 | 20 | ≤800 | |
| | | 2.8 ໄມ້ 2x30 | | 2 | 30 | ≤800 | |
| | | 2.9 ໄມ້ 3x30 | | 3 | 30 | ≤800 | |
| | | 2.10 ໄມ້ທີ່ຈະປຸງແຕ່ງເສົາເຮືອນ | | 15-30 | 15-30 | 300-800 | |
| | | 2.11 ໄມ້ແປຮູບທີ່ຈະປຸງແຕ່ງແປ້ນທຸກຊະນິດ | | 1-5 | ≤120 | 200-800 | |
| | 4408 | 3.) ໄມ້ຊອຍຕ່າງໆ | 3. Spited wood | | | | |
| | | 3.1. ໄມ້ຮູບປະພັນທຸກຊະນິດ | 3.1. formulated sawn woods | ≤5 | ≤7 | ≤800 | |
| | | 3.2. ໄມ້ 3X3 | | 3 | 3 | ≤800 | |
| | | 3.3. ໄມ້ 4X4 | | 4 | 4 | ≤800 | |
| | | 3.4. ໄມ້ 3X5 | | 3 | 5 | ≤800 | |
| | | 3.5. ໄມ້ 3X7 | | 3 | 7 | ≤800 | |
| | | 3.6. ໄມ້ 3X8 | | 3 | 8 | ≤800 | |
| | | 3.7. ໄມ້ເສັ້ນນ້ອຍທຸກຊະນິດ | 3.7. Wood chip | ≤ 3 | ≤ 5 | ≤800 | |

❖ **ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ** ແມ່ນ ຜະລິດຕະພັນໄມ້ ທີ່ຜ່ານຂະບວນການຜະລິດ ຫຼື ການປຸງແຕ່ງຂັ້ນສອງ (ຜະລິດຕໍ່ຈາກຂັ້ນໜຶ່ງ ຫຼື ປຸງແຕ່ງໃນລະດັບກາງ) ຄື: ອົບ ຫຼື ຕາກແດດ, ຕັດຂະໜາດ, ຂຶ້ນຮູບ, ປາດໂຄ້ງ, ກົບ, ຂັດ (ພື້ວຂ້າງນອກມີຄວາມລະອຽດກວ່າໄມ້ເລື່ອຍແປຮູບ) ແລະ ອື່ນໆ, ແຕ່ບໍ່ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ (Knock-Down) ຕາມການອອກແບບເປັນໜຶ່ງຊຸດ ຫຼື ໜຶ່ງຫຼັງ, ບໍ່ທັນນຳໃຊ້ໄດ້ເລີຍ ແລະ ມີມູນຄ່າເພີ່ມປານກາງ. ຜະລິດຕະພັນດັ່ງກ່າວ ເປັນຜະລິດຕະພັນຂອງໂຮງງານປຸງແຕ່ງໄມ້ປອກ, ໂຮງງານປຸງແຕ່ງໄມ້ຝານ, ໂຮງງານປຸງແຕ່ງໄມ້ສຳລັບການກໍ່ສ້າງ ແລະ ອື່ນໆ, ສາມາດນຳໄປຜະລິດເປັນຜະລິດຕະພັນສຳເລັດຮູບໄດ້. ປະເພດ ແລະ ຂະໜາດຂອງຜະລິດຕະພັນດັ່ງກ່າວ ໄດ້ກຳນົດໄວ້ໃນຕາຕະລາງທີ 02 ລຸ່ມນີ້.

**ຕາຕະລາງທີ 02: ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ (Semi Wood Products)**

| ເລກລະຫັດ ກິດຈະການ (ໂຮງງານ) | ລະຫັດເຄົ້າ Heading | ລາຍການຜະລິດຕະພັນ: Products | | ຂະໜາດບໍ່ກາຍ (ຊມ)/Maximum size (cm) | | | ໝາຍເຫດ |
|---|---|---|---|---|---|---|---|
| | | ຊື່ເປັນພາສາລາວ | English | ໜາ/ Thick | ກ້ວາງ/Wide | ຍາວ/Length | |
| 1621 ໂຮງງານປຸງແຕ່ງແຜ່ນໄມ້, ໄມ້ປອກ ແລະ ຕ່າງໆ Manufacture of veneer, Slicing board. | 4408 | 1.) ໄມ້ປອກ, ໄມ້ຝານ | 1.) Veneer and Slicing board. | | | | |
| | | 1. ໄມ້ປອກ | 1. Veneer | 0.6 | 150 | 300 | |
| | | 2. ໄມ້ຝານ | 2. Slicing board | 0.6 | 150 | 300 | |
| 1622.1 ໂຮງງານປຸງແຕ່ງໄມ້ ທີ່ໃຊ້ໃນການກໍ່ສ້າງ Manufacture of builders' carpentry and joinery. | 4418.1 | 2.) ໄມ້ສຳລັບການກໍ່ສ້າງ | 2.) Builder's Carpentry and Construction. | | | | |
| | | 1. ໄມ້ໂຄງຫລັງຄາ | 1. Roof structure | | | | |
| | | • ໄມ້ອີກໄກ່ (ໄມ້ແປ) | • Wooden roof | 5 | 20 | 800 | |
| | | • ໄມ້ໂຄງເພດານ | • Ceiling frame | 5 | 10 | 800 | |
| | | • ໄມ້ຂ້າວ | • Roof beams | 5 | 10 | 800 | |
| | | • ໄມ້ສີຍົວ | | 5 | 15 | 800 | |
| | | • ໄມ້ຂັດແປ | | 5 | 10 | 800 | |
| | | • ໄມ້ເສົາຄັ້ງ | • Struts | 5 | 15 | 800 | |
| | | • ໄມ້ປ້ານລົມ,ປ້ານຊາຍ | | 3 | 25 | 800 | |
| | | • ໄມ້ຂື່ | | 5 | 20 | 800 | |
| | | • ໄມ້ຄໍສອງ | | 5 | 20 | 800 | |
| | | 2. ໄມ້ເສົາໂຊ | 2. Column | 30 | 30 | 500 | |
| | | 3. ໄມ້ຂາງໜີບ | 3. Mounding | 5 | 20 | 800 | |
| | | 4. ໄມ້ແປ້ນພື້ນ, ແປ້ນແອ້ມ | 4. Lumber flooring | 3 | 30 | 800 | |
| | | | | 2 | 20 | 800 | |
| | | 5. ໄມ້ຕົງ | 5. Rafter | 5 | 10 | 800 | |
| | | 6. ໄມ້ຂາງ | 6. Beam | 5 | 20 | 800 | |

| | | | | | | | |
|---|---|---|---|---|---|---|---|
| 1622.2<br>ໂຮງງານປຸງແຕ່ງເຄື່ອງປະກອບໃນອາຄານ<br><br>Manufacture of builders' carpentry and joinery. | 4418.1 | 3.) ໄມ້ປະກອບໃນອາຄານ (ຊິ້ນສ່ວນ) | 3.) Builder's Carpentry and Joinery. | | | | |
| | | 1. ປະຕູ | 1. Door | | | | |
| | | •ໄມ້ວົງກົບປະຕູ | • Door frame | 15 | 20 | 300 | |
| | | •ໄມ້ບານປະຕູ | • Panel of door | 5 | 150 | 300 | |
| | | •ໄມ້ຂອບບານປະຕູ | •Door Pa.Frame | 10 | 20 | 300 | |
| | | 2. ປ່ອງຢ້ຽມ ( ໄມ້ຂອບປ່ອງຢ້ຽມ) | 2. window | | | | |
| | | •ໄມ້ວົງກົບປ່ອງຢ້ຽມ | • Window frame | 15 | 20 | 300 | |
| | | •ໄມ້ບານປ່ອງຢ້ຽມ | • Window panel | 5 | 150 | 300 | |
| | | •ໄມ້ຂອບບານປ່ອງຢ້ຽມ | •Window Pa. Fr. | 10 | 20 | 300 | |
| | | 3. ລູກຕັ່ງ | 3. Wood piral stair | 20 | 20 | 150 | |
| | | 4. ໄມ້ຂອບ, ຄິ້ວ, ສາຍບົວ | 4. Molding | 3 | 15 | 650 | |
| | | 5. ແມ່ຂັ້ນໄດ | 5. Staircase | 10 | 30 | 600 | |
| | | 6. ລູກຂັ້ນໄດ | 6. Stair | 5 | 30 | 200 | |
| | | 7. ຮາວພະນັກ, ຮາວຂັ້ນໄດ | 7. Railing | 6 | 15 | 600 | |
| | | 8. ເຄື່ອງປະກອບອື່ນໆ | 8.Others | - | - | - | |
| 3100<br>ໂຮງງານເຟີນີເຈີ ດ້ວຍໄມ້, ຫວາຍ ແລະ ໄມ້ປ່ອງ<br><br>Manufacture of furniture from wood, rattan and bamboo | | **4.) ຜະລິດຕະພັນໄມ້ເຄິ່ງສຳເລັດຮູບອື່ນໆ**<br>**4.1.) ຜະລິດຕະພັນໄມ້ເຄິ່ງສຳເລັດຮູບທີ່ມີຂະໜາດ ແລະ ຮູບຊົງຄ້າຍຄື ເຄື່ອງເຟີນີເຈີສຳເລັດຮູບ** | **4. Semi Wood Products (Furmiture)** | | | | |
| | 9401.1 | 1. ຊຸດສະໂລງໄມ້ທຸກປະເພດ | 1. Sofas | | | | |
| | | • ຂາ | • Legs | 15 | 15 | 100 | |
| | | • ຂາງ | • Beams | 5 | 20 | 250 | |
| | | • ແປ້ນໜ້າ | • Boards | 5 | 65 | 250 | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |
| | 9403.1 | 2. ຊຸດໂຕະໄມ້ທຸກປະເພດ | 2. Tables | | | | |
| | | • ຂາລ່ຽມ | • Legs (square) | 15 | 15 | 150 | |
| | | • ຂາກົມ | • Legs (round) | 20 | 20 | 150 | |
| | | • ຂາງ | • Beams | 5 | 15 | 250 | |
| | | • ແປ້ນໜ້າ | • Board | 5 | 120 | 250 | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |
| | 9401.1 | 3. ຊຸດຕັ່ງໄມ້ທຸກປະເພດ | 3. Chairs | | | | |
| | | • ຂາລ່ຽມ | • Legs (square) | 15 | 15 | 150 | |
| | | • ຂາກົມ | • Legs (round) | 20 | 20 | 150 | |
| | | • ຂາງ | • Beams | 5 | 15 | 250 | |
| | | • ແປ້ນໜ້າ | • Boards | 5 | 50 | 250 | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |

| | | | | | | | |
|---|---|---|---|---|---|---|---|
| | 9403.1 | 4. ຊຸດຕູ້ໄມ້ທຸກປະເພດ | 4. Cabinets | | | | |
| | | • ຂາ | • Legs | 5 | 10 | 300 | |
| | | • ຂາງ, ໄມ້ເຊັນ | • Beams | 5 | 10 | 300 | |
| | | • ແປ້ນໜ້າ | • Boards | 4 | 60 | 300 | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |
| | 9404.1 | 5. ຊຸດຕຽງໄມ້ທຸກປະເພດ | 5. Mattress | | | | |
| | | • ຂາຕຽງ | • Legs | 15 | 15 | 100 | |
| | | • ແປ້ນຂ້າງຕຽງ | • Beams | 5 | 40 | 220 | |
| | | • ແປ້ນທິວຕຽງ | • Boards | 5 | 60 | 220 | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |
| | 9403.1 | 6. ເຄື່ອງຕົບແຕ່ງຕ່າງໆ ທີ່ເປັນເຟີນີເຈີ ທີ່ເຮັດດ້ວຍໄມ້. | 6. Decorative at furniture of woods | - | - | - | |
| 1624<br>ໂຮງງານປູງແຕ່ງໄມ້ ປູພື້ນ ແລະ ໄມ້ປັກເກ.<br><br>Manufacture of wood flooring and parquet | 4409 | 4.2.) ຜະລິດຕະພັນເຄິ່ງສຳເລັດຮູບທີ່ມີຂະໜາດ ແລະ ຮູບຊົງຄ້າຍຄືໄມ້ ປັກເກ້, ໄມ້ປູພື້ນ, ໄມ້ປະກອບຖັງລົດ | 5.) Parquet, wood flooring and truck body Joinery. | | | | |
| | | 1. ໄມ້ປັກເກ (ຈາກເສດໄມ້ໃນໂຮງເລື່ອຍ) | 1. Parquet floorings | | | | |
| | | 1.1. ໄມ້ປັກເກປູພື້ນ ແລະ ປັກເກອື່ນໆ | 1.1. Parquet / random floor. | ≥ 5 | ≥ 15 | ≥ 120 | |
| | | 1.2. ໄມ້ປູພື້ນແບບຕໍ່ເສັ້ນ-ຕໍ່ແຜ່ນທຸກຊະນິດ | 1.2. FJL Floorings | 5 | 20 | 650 | |
| | | 1.3. ໄມ້ປູພື້ນແບບໂມເສດ | 1.3. Mosaic Pa.Fl. | 5 | 50 | 50 | |
| | | 2. ໄມ້ປູພື້ນ | 2. Wood flooring | | | | |
| | | 2.1. ໄມ້ປູພື້ນແບບດ້ານເທິງມີຮ່ອງກັນມື່ນ. | 2.1. ULIN Decking | 5 | 20 | 650 | |
| | | 2.2. ໄມ້ປູພື້ນແບບໜ້າລຽບ | 2.2. ELO Decking | 5 | 20 | 650 | |
| | | 2.3. ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງຮອບຕົວ | 2.3. Tongue and Grove flooring | 5 | 20 | 650 | |
| | | 2.4. ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງປະສົມ | 2.4. Tongue and Grove lamin. flooring | 5 | 20 | 650 | |
| | 4416.1 | 3. ໄມ້ປະກອບຖັງລົດ: | 3. Truck body joinery | | | | |
| | | 3.1. ໄມ້ຂາງລົດ | 3.1. Cross bearer | 10 | 15 | 250 | |
| | | 3.2. ແປ້ນປູພື້ນຖັງລົດ | 3.2. Truck's flooring | 5 | 15 | 650 | |
| | | 3.3. ຝາຂ້າງ | 3.3. Gate boards | 5 | 15 | 300 | |

❖ **ຜະລິດຕະພັນໄມ້ສໍາເລັດຮູບ:** ແມ່ນ ຜະລິດຕະພັນໄມ້ ທີ່ຜ່ານຂະບວນການຜະລິດ ຫຼື ການປຸງແຕ່ງ ຂັ້ນສາມ (ຜະລິດຕໍ່ຈາກຂັ້ນສອງ ຫຼື ປຸງແຕ່ງຂັ້ນສຸດທ້າຍ) ຄື: ບາກ, ເຈາະ, ສິ່ວ, ແລ່ນຮ່ອງ, ແລ່ນລີ້ນ, ປາດເດືອຍ, ເຊື່ອມຕໍ່, ຂັດຜິວ, ຂັດເງົາ, ລົງສີ ຫຼື ຍັງບໍ່ລົງສີ, ເຈາະຮູ, ຈັບບ່ອດ ແລະ ອື່ນໆ ສາມາດນໍາໃຊ້ໄດ້ເລີຍ ຫຼື ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ (Knock-Down) ໂດຍບໍ່ຕ້ອງປຸງແຕ່ງເພີ່ມເຕີມ ແລະ ມີມູນຄ່າເພີ່ມສູງ. ຜະລິດຕະພັນດັ່ງກ່າວ ເປັນຜະລິດຕະພັນຂອງໂຮງງານປຸງແຕ່ງໄມ້ອັດ, ໂຮງງານປຸງແຕ່ງເຄື່ອງປະກອບໃນອາຄານ, ໂຮງງານປຸງແຕ່ງໄມ້ປູພື້ນ ແລະ ໄມ້ປັກເກ, ໂຮງງານປຸງແຕ່ງພາຊະນະບັນຈຸດ້ວຍໄມ້, ໂຮງງານຜະລິດເຄື່ອງໃຊ້ສອຍດ້ວຍໄມ້, ໂຮງງານເຟີນີເຈີ, ໂຮງຊ່າງທັດຖະກໍາຄອບຄົວ ແລະ ອື່ນໆ. ປະເພດ ແລະ ຂະໜາດຂອງຜະລິດຕະພັນດັ່ງກ່າວ ໄດ້ກໍານົດໄວ້ໃນຕາຕະລາງທີ 03 ລຸ່ມນີ້.

**<u>ຕາຕະລາງທີ 03</u>: ຜະລິດຕະພັນໄມ້ສໍາເລັດຮູບ** (Finished Wood products)

| ເລກລະຫັດກິດຈະການ (ໂຮງງານ) | ລະຫັດເຄົ້າ Heading | ລາຍການຜະລິດຕະພັນ: Products | | ຂະໜາດບໍ່ກາຍ (ຊມ) / Maximum size (cm) | | | ໝາຍເຫດ |
|---|---|---|---|---|---|---|---|
| | | ຊື່ເປັນພາສາລາວ | English | ໜາ/Thick | ກ້ວາງ/Wide | ຍາວ/Length | |
| **1621** ໂຮງງານປຸງແຕ່ງແຜ່ນໄມ້, ໄມ້ປອກ ແລະ ໄມ້ອັດຕ່າງໆ Manufacture of sheets, plywood and boards. | 4412 | 1.) ໄມ້ອັດ | 1.) Plywood etc | | | | |
| | | 1.1 ໄມ້ອັດປະສານ | 1. Mix plywood | --- | --- | --- | ບໍ່ກໍານົດຂະໜາດ |
| | | 1.2 ໄມ້ອັດຈາກເສດໄມ້ | 2. Particle board | --- | --- | --- | |
| | | 1.3 ໄມ້ອັດອື່ນໆ | 3. Other wood boards | --- | --- | --- | |
| **1622.1** ໂຮງງານປຸງແຕ່ງໄມ້ ທີ່ໃຊ້ໃນການກໍ່ສ້າງ Manufacture of builders' carpentry and joinery. | 4418 | 2.) ໄມ້ສໍາລັບການກໍ່ສ້າງ | 2.) Builder Carpentry and Construction | | | | |
| | | 1. ໄມ້ໂຄງຫລັງຄາ | 1. Roof structure | | | | |
| | | • ໄມ້ອິກໄກ່ (ໄມ້ແປ) | • Wooden roof | 5 | 20 | 800 | |
| | | • ໄມ້ໂຄງເພດານ | • Ceiling frame | 5 | 10 | 800 | |
| | | • ໄມ້ຂ້າວ | • Roof beams | 5 | 10 | 800 | |
| | | • ໄມ້ສີຍົວ | | 5 | 15 | 800 | |
| | | • ໄມ້ຂັດແປ | | 5 | 10 | 800 | |
| | | • ໄມ້ເສົາດັ້ງ | • Struts | 5 | 15 | 800 | |
| | | • ໄມ້ປ້ານລົມ,ປ້ານຊາຍ | | 3 | 25 | 800 | |
| | | • ໄມ້ຂື່ | | 5 | 20 | 800 | |
| | | • ໄມ້ຄໍສອງ | | 5 | 20 | 800 | |
| | | 2. ໄມ້ເສົາໂຊ | 2. Column | 30 | 30 | 500 | |
| | | 3. ໄມ້ຂາງໜີບ | 3. Mounding | 5 | 20 | 800 | |
| | | 4. ໄມ້ແປ້ນພື້ນ, ແປ້ນແອ້ມ | 4. Lumber flooring | 5 | 25 | 800 | |
| | | 5. ໄມ້ຕົງ | 5. Rafter | 5 | 10 | 800 | |
| | | 6. ໄມ້ຂາງ | 6. Beam | 5 | 20 | 800 | |

| | | | | | | | |
|---|---|---|---|---|---|---|---|
| 1622.2<br>ໂຮງງານປຸງແຕ່ງເຄື່ອງປະກອບໃນອາຄານ<br><br>Manufacture of builders' carpentry and joinery. | 4418 | 3.) ໄມ້ປະກອບໃນອາຄານ (ສຳເລັດຮູບ) | 3.) Builder's Capentry and Joinery | | | | |
| | | 1. ປະຕູ | 1. Door | | | | |
| | | • ຂະໜາດປະຕູ | • Door size | --- | --- | --- | |
| | | • ໄມ້ວົງກົບປະຕູ | • Door frame | --- | --- | --- | |
| | | • ໄມ້ບານປະຕູ | • Panel of door | --- | --- | --- | |
| | | • ໄມ້ຂອບບານປະຕູ | • Door Pa.Frame | --- | --- | --- | |
| | | 2. ປ່ອງຢ້ຽມ | 2. window | | | | |
| | | • ຂະໜາດປ່ອງຢ້ຽມ | • Window size | --- | --- | --- | |
| | | • ໄມ້ວົງກົບປ່ອງຢ້ຽມ | • Window frame | --- | --- | --- | ບໍ່ກຳນົດຂະໜາດ |
| | | • ໄມ້ບານປ່ອງຢ້ຽມ | • Window panel | --- | --- | --- | |
| | | • ໄມ້ຂອບບານປ່ອງຢ້ຽມ | • Window Pa. Fr. | --- | --- | --- | |
| | | 3. ລູກຕຶ່ງ | 3. Wood spiral stair | --- | --- | --- | |
| | | 4. ໄມ້ຂອບ, ຄິ້ວ, ສາຍບົວ | 4. Molding | --- | --- | --- | |
| | | 5. ແມ່ຂັ້ນໄດ | 5. Staircase | --- | --- | --- | |
| | | 6. ລູກຂັ້ນໄດ | 6. Stair | --- | --- | --- | |
| | | 7. ຮາວພະນັກລະບຽງ, ຮາວຂັ້ນໄດ | 7. Railing | --- | --- | --- | |
| | | 8. ເຄື່ອງປະກອບໃນອາຄານອື່ນໆ | 8. Other Builder's joinery | - | - | - | |
| 1624<br>ໂຮງງານປຸງແຕ່ງໄມ້ປູພື້ນ ແລະ ໄມ້ປັກເກ.<br><br>Manufacture of wood flooring and parquet | 4412 | 4.) ໄມ້ປັກເກ້, ໄມ້ປູພື້ນ, ໄມ້ປະກອບຖັງລົດ | 4.) Parquet, wood flooring and truck body joinery. | | | | |
| | | **1. ໄມ້ປັກເກ** | **1. Parquet** floorings | | | | |
| | | 1.1. ໄມ້ປັກເກປູພື້ນ ແລະ ປັກເກອື່ນໆ | 1.1. Parquet flooring/ random floorings | --- | --- | --- | |
| | | 1.2. ໄມ້ປູພື້ນແບບຕໍ່ເສັ້ນ-ຕໍ່ແຜ່ນທຸກຊະນິດ | 1.2. FJL Floorings | --- | --- | --- | |
| | | 1.3. ໄມ້ປູພື້ນແບບໂມເສດ | 1.3. Mosaic parquet floorings | --- | --- | --- | ບໍ່ກຳນົດຂະໜາດ |
| | | **2. ໄມ້ປູພື້ນ** | **2. Wood flooring** | | | | |
| | | 2.1. ໄມ້ປູພື້ນແບບດ້ານເທິງມີຮ່ອງກັນມື່ນ. | 2.1. ULIN Decking | --- | --- | --- | |
| | | 2.2. ໄມ້ປູພື້ນແບບໜ້າລຽບ | 2.2. ELO Decking | --- | --- | --- | |
| | | 2.3. ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງຮອບຕົວ | 2.3. Tongue and Grove flooring | --- | --- | --- | |
| | | 2.4. ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງປະສົມ | 2.4. Tongue and Grove laminated floor. | --- | --- | --- | |
| | 4416 | 3. ໄມ້ປະກອບຖັງລົດ | 3. Truck body joinery | | | | |
| | | 3.1.ໄມ້ຂາງລົດ | 3.1. Cross bearer | 6 | 15 | 250 | |
| | | 3.2. ແປ້ນປູພື້ນຖັງລົດ | 3.2. Truck's flooring | 5 | 15 | 650 | |
| | | 3.3. ຝາຂ້າງ | 3.3. Gate boards | 5 | 15 | 300 | |

| | | | | | | | |
|---|---|---|---|---|---|---|---|
| | 4412 | 5.) ໄມ້ເຊື່ອມຕໍ່ປະສານ<br>1. ຂາຫຼ່ຽມ<br>2. ໜ້າໂຕະ<br>3. ຜະລິດຕະພັນໄມ້ເຊື່ອມຕໍ່ປະສານ ຊະນິດອື່ນໆ | 5. Laminated | ---<br>---<br>--- | ---<br>---<br>--- | ---<br>---<br>--- | ບໍ່ກຳນົດຂະໜາດ |
| 1623<br>ໂຮງງານປຸງແຕ່ງພາຊະນະບັນຈຸດ້ວຍໄມ້<br><br>Manufacture of wooden containers | 4415 | 6.) ພາຊະນະບັນຈຸທີ່ເຮັດດ້ວຍໄມ້<br>1. ຫີບ ຫລື ແກັດ<br>- ໄມ້ຫີບ ຫຼື ແກັດ<br>2. ກ່ອງ, ກັບ<br>- ໄມ້ກ່ອງ ຫຼື ກັບ<br>3. ລັງ<br>- ໄມ້ລັງ<br>4. ຖັງໝັກ<br>- ໄມ້ຖັງໝັກ<br>5. ແກນມ້ວນສາຍກາບທຸກຊະນິດ<br>- ໄມ້ແກນມ້ວນສາຍກາບທຸກຊະນິດ<br>6. ພະເລດ<br>- ໄມ້ໜ້າພະເລດ<br>- ໄມ້ຄານພະເລດ<br>- ໄມ້ຕີນພະເລດ | 6.) Wooden Container<br>1. Suitcase<br>- Suitcase wood<br>2. Boxes<br>- Boxes wood<br>3. Crates<br>- Crates wood<br>4. Vats<br>- Vats wood<br>5. All wood cabledrums<br>- Wood cable drums<br>6. Pallets<br>- Wood Board<br>- Beam | -<br>-<br>-<br>-<br>-<br>-<br>-<br>-<br>- | -<br>-<br>-<br>-<br>-<br>-<br>-<br>-<br>- | -<br>-<br>-<br>-<br>-<br>-<br>-<br>-<br>- | ບໍ່ກຳນົດຂະໜາດ |
| 1629<br>ໂຮງງານຜະລິດເຄື່ອງໃຊ້ສອຍດ້ວຍໄມ້, ຫວາຍ, ໄມ້ປ່ອງ<br><br>Manufacture of other products of wood, rattan, bamboo | 4417 | 7.) ເຄື່ອງໃຊ້ສ້ອຍທີ່ເຮັດດ້ວຍໄມ້<br>1. ດ້າມເຄື່ອງມືຕ່າງໆທີ່ເຮັດດ້ວຍໄມ້<br>2. ໄມ້ໃສ່ໃນເກີບບູດ ແລະ ສົ້ນເກີບ<br>3. ຂໍເກາະເສື້ອ | 7.) Wooden handle Products<br>1. Wooden handles<br>2. Wooden boot and shoe lasts<br>3. Clothes hangers | -<br>-<br>- | -<br>-<br>- | -<br>-<br>- | ບໍ່ກຳນົດຂະໜາດ |
| | 4419 | 4. ຜະລິດຕະພັນເຄື່ອງໄມ້ທີ່ໃຊ້ໃນເຮືອນ, ເຮືອນຄົວ | 4. Household utensils and kitchenware | - | - | - | |
| | 4420 | 5. ກະສວຍ, ຫລອດດ້າຍ ແລະ ສິ່ງອື່ນທີ່ເຮັດຈາກໄມ້<br>6. ເຄື່ອງຫັດຖະກຳໄມ້ອື່ນໆ<br>7. ການຜະລິດວັດຖຸຖັກສານ | 5. Bobbins, reels and other woods<br>6. Wooden handicrafts and carving product<br>7. Manufacture of plaiting materials | -<br>-<br>- | -<br>-<br>- | -<br>-<br>- | |
| | 4414 | 8. ການຜະລິດຂອບແວ່ນ, ຂອບຮູບ ແລະ ງານສິນລະປະຕ່າງໆ | 8. Wooden mirror, picture frames and other artists | - | - | - | |

| | | | | | | | |
|---|---|---|---|---|---|---|---|
| | 4420 | 9. ການຜະລິດຄັນຮົ່ມ | 9. Manufacture of umbrella | - | - | - | ບໍ່ກໍານົດ ຂະໜາດ |
| | | 10. ການຜະລິດກັບບັນຈຸ ກອກຢາ ແລະ ການຜະລິດ ອື່ນໆ ທີ່ກ່ຽວຂ້ອງ. | 10. Manufacture of blocks, smoking pipes. | - | - | - | |
| 3100 ໂຮງງານເຟີນີເຈີ ດ້ວຍໄມ້, ຫວາຍ ແລະ ໄມ້ປ່ອງ<br>Manufacture of furniture from wood, rattan and bamboo | | 8.) ເຄື່ອງເຟີນີເຈີ | 8.) Furniture | | | | |
| | 9401 | 1. ຊຸດສະໂລງໄມ້ທຸກປະເພດ | 1. Sofas | | | | |
| | | • ຂາ | • Legs | - | - | - | |
| | | • ຂາງ | • Beams | - | - | - | ບໍ່ກໍານົດ ຂະໜາດ |
| | | • ແປ້ນໜ້າ | • Boards | - | - | - | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |
| | 9403 | 2. ຊຸດໂຕະໄມ້ທຸກປະເພດ | 2. Tables | | | | |
| | | • ຂາລ່ຽມ | • Legs (square) | - | - | - | |
| | | • ຂາກົມ | • Legs (round) | - | - | - | |
| | | • ຂາງ | • Beams | - | - | - | |
| | | • ແປ້ນໜ້າ | • Boards | - | - | - | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |
| | 9401 | 3. ຊຸດຕັ່ງໄມ້ທຸກປະເພດ | 3. Chairs | | | | |
| | | • ຂາລ່ຽມ | • Legs (square) | - | - | - | |
| | | • ຂາກົມ | • Legs (round) | - | - | - | |
| | | • ຂາງ | • Beams | - | - | - | |
| | | • ແປ້ນໜ້າ | • Boards | - | - | - | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |
| | 9403 | 4. ຊຸດຕູ້ໄມ້ທຸກປະເພດ | 4. Cabinets | | | | |
| | | • ຂາ | • Legs | - | - | - | |
| | | • ຂາງ, ໄມ້ເຊັນ | • Beams | - | - | - | |
| | | • ແປ້ນໜ້າ | • Boards | - | - | - | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |
| | 9404 | 5. ຊຸດຕຽງໄມ້ທຸກປະເພດ | 5. Mattress | | | | |
| | | • ຂາ | • Legs | - | - | - | |
| | | • ຂາງ | • Beams | - | - | - | |
| | | • ແປ້ນໜ້າ | • Boards | - | - | - | |
| | | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - | |
| | 9403 | 6. ເຄື່ອງຕົບແຕ່ງຕ່າງໆທີ່ ເປັນເຟີນີເຈີເຮັດດ້ວຍໄມ້ | 6. Decorative at furniture of woods | - | - | - | |
| | 4420 | 9.) ເຄື່ອງຫັດຖະກໍາດ້ວຍໄມ້ | 9.) Wooden Handicraft | | | | |
| | | 1. ເຄື່ອງປະດັບ | 1. Wood marquetry | - | - | - | |
| | | 2.ເຄື່ອງຂອງປະດັບ ຫຼື ເຄື່ອງຂອງ ອື່ນໆ ທີ່ຄ້າຍຄື | 2. Wood marquetry and etc. | - | - | - | ບໍ່ກໍານົດ ຂະໜາດ |
| | | 10.) ຜະລິດຕະພັນຈາກຂີ້ເລື່ອຍ | | | | | |
| | | 1. ຂີ້ເລື່ອຍອັດແທ່ງ | 1. Briquette | - | - | - | |
| | | 2. ຂີ້ເລື່ອຍອັດເມັດ | 2. Pellet | - | - | - | |